| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດວິຊາການດໍາເນີນກິດຈະການ ຫ້ອງປິ່ນປົວສັດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoAF-LFD-10 | 17.11.2017 | ກົມລ້ຽງສັດ ແລະ ການປະມົງ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | A - ກະສິກໍາ, ປ່າໄມ້ ແລະ ການປະມົງ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ຫ້ອງປິ່ນປົວສັດ ຕ້ອງຮັບປະກັນຄວາມປອດໄພຕໍ່ຊີວິດຂອງສັດ ແລະ ຮັບປະກັນບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ຈາກການບໍລິການຂອງຕົນ, ຈຶ່ງມີຄວາມຈໍາເປັນຕ້ອງບັງຄັບໃຫ້ມີການຂໍ ການອະນຸຍາດການດໍາເນີນກິດຈະການດັ່ງກ່າວ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງດໍາເນີນກິດຈະການຫ້ອງປິ່ນປົວສັດເຊິ່ງຈະບໍລິການປິ່ນປົວສັດທົ່ວໄປ ແຕ່ບໍ່ກວມເອົາ ສັດຕະວະແພດບ້ານ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ຫ້າມຍົກຍ້າຍ ຫລື ປ່ຽນແປງຕໍ່ເຕີມສະຖານທີ່ບໍລິການປິ່ນປົວສັດ ໂດຍບໍ່ໄດ້ຮັບອະນຸຍາດ 2. ການປ່ຽນຜູ້ດໍາເນີນການ ຫລື ຜູ້ປິ່ນປົວສັດ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ສັດຕະວະແພດ ຮັບຮູ້ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ | 15 | ກົດໝາຍກ່ຽວຂ້ອງບໍ່ໄດ້ລະບຸໄລຍະເວລາໃນການພິຈາລະນາ ແຕ່ເຈົ້າໜ້າທີ່ແຈ້ງວ່າ ໄລຍະເວລາການພິຈາລະນາປົກກະຕິແມ່ນບໍ່ກາຍ 15 ວັນລັດຖະການ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ການອອກໃບອະນຸຍາດ** | | |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ມີສຸຂະພາບແຂງແຮງ ແລະ ອາຍຸບໍ່ຕໍ່າກວ່າ 20 ປີ, ມີພູມລໍາເນົາຕັ້ງຢູ່ ສປປ ລາວ ຖາວອນບໍ່ຕໍ່າກວ່າ 5 ປີ; ບໍ່ຢູ່ໃນໄລຍະດໍາເນີນຄະດີ ຫຼື ຖືກປະຕິບັດວິໄນ; ບໍ່ມີປະຫວັດລົ້ມລະລາຍທາງດ້ານທຸລະກິດມາກ່ອນ; 2. ມີສະຖານທີ່ ແລະ ອຸປະກອນປິ່ນປົວເໝາະສົມ ຄື ຕ້ອງໄດ້ມາດຕະຖານເຕັກນິກວິຊາການ ໄດ້ແກ່ (i) ສະຖານທີ່ຕ້ອງບໍ່ປົນເປກັບສະຖານທີ່ພັກເຊົາ ຫລື ບ່ອນຂາຍເຄື່ອງອື່ນ ແລະ ມີເນື້ອທີ່ບໍ່ຕໍ່າກວ່າ 20 ຕາແມັດ ມີຄອກຂັງສະເພາະ ທີ່ມີເນື້ອທີ່ບໍ່ຕໍ່າກວ່າ 12 ຕາແມັດ; (ii) ມີປ້າຍຮ້ານ ລະບຸຊື່ເຈົ້າຂອງຮ້ານ, ທີ່ຢູ່, ໂທລະສັບ, ເລກທະບຽນທຸລະກິດ ແລະ ເລກທີໃບອະນຸຍາດດໍາເນີນກິດຈະການ; (iii) ມີອຸປະກອນສັດຕະວະແພດທີ່ເໝາະສົມ 3. ມີບຸກຄະລາກອນພຽງພໍ ແລະ ນັກວິຊາການດ້ານສັດຕະວະແພດຊັ້ນປະລິນຍາຕີ ຫຼື ທຽບເທົ່າຂຶ້ນໄປ ແລະ ສໍາລັບ ຜູ້ປິ່ນປົວສັດ ຕ້ອງແມ່ນ ວິຊາການຜູ້ທີ່ມີໃບປະກາດສະນີຍະບັດ ດ້ານສັດຕະວະແພດ ແລະ ໄດ້ຮັບອະນຸຍາດດໍາເນີນວິຊາຊີບຈາກ ຂະແໜງກະສິກໍາ ແລະ ປ່າໄມ້ ເຮັດວຽກຕົວຈິງໃນການປິ່ນປົວສັດ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ປະຕິເສດ ໃນກໍລະນີຜູ້ຮ້ອງຂໍ ບໍ່ມີຄຸນສົມບັດຫຼືປະຕິບັດຕາມເງື່ອນໄຂທີ່ກໍານົດໄວ້ໄດ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ກ່ອນໃບອະນຸຍາດຈະໝົດອາຍຸການນໍາໃຊ້ 1 ເດືອນ ຜູ່ປະກອບການຕ້ອງປະກອບເອກະສານມາຂໍຕໍ່ໃບອະນຸຍາດດັ່ງນີ້: - ໃບຄໍາຮ້ອງຂໍຕໍ່ບໍລິການປິ່ນປົວສັດ - ໃບຢັ້ງຢືນສຸຂະພາບບໍ່ເກີນ 3 ເດືອນ - ໃບຢັ້ງຢືນທີ່ຢູ່ປະຈຸບັນທີ່ມີຮູບຕິດ - ຮູບຖ່າຍບໍ່ເກີນ 1 ປີ, ຂະໜາດ 3x4 ຈໍານວນ 3 ໃບ - ບົດບັນທຶກການລົງກວດກາ ການດໍາເນີນກິດຈະການຫ້ອງປິ່ນປົວສັດ ຈາກເຈົ້າໜ້າທີ່ສັດຕະວະແພດ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທຳນຽມ | | | | |
|---|---|---|---|---|
| ບໍ່? | | | ຄຳຮ້ອງ | |
| ແມ່ນແລ້ວ | 0.00 | 0.00 | 0.00 | 0.00 |
| **ຄຳເຫັນ** | ສຳລັບຄ່າທຳນຽມຕ່າງໆແມ່ນພວກເຮົາຍັງສະເໜີຂໍອະນຸມັດໃນດຳລັດ03 ຢູ່ເຊິ່ງຍັງຢູ່ໃນຂັ້ນຕອນພິຈາລະນາຂອງຄະນະລັດຖະບານ | | | |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທຳນຽມ | ຄ່າ ແບບຟອມ ຄຳຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 0.00 | 0.00 | 0.00 |
| **ຄຳເຫັນ** | ສຳລັບຄ່າທຳນຽມຕ່າງໆແມ່ນພວກເຮົາຍັງສະເໜີຂໍອະນຸມັດໃນດຳລັດ03 ຢູ່ເຊິ່ງຍັງຢູ່ໃນຂັ້ນຕອນພິຈາລະນາຂອງຄະນະລັດຖະບານ | | | |

| ນິຕິກຳທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ນິຕິກຳ | ເລກທີ | ວັນທີ | ຄຳເຫັນ |
| ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ຫ້ອງປິ່ນປົວສັດ, ຮ້ານຂາຍຢາ ແລະ ເຄື່ອງມືສັດຕະວະແພດ | 1973/ກປ | 23.08.2012 | ໝວດທີ 2 ການດຳເນີນກິດຈະການຫ້ອງປິ່ນປົວສັດ (ມາດຕາ 4 ຫາມາດຕາ 7) |
| ກົດໝາຍວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) | 08/ສພຊ | 11.11.2016 | ມາດຕາ 40-41 |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ແຜນອຸປະກອນຮັບໃຊ້ |
| ແຜນວາດທີ່ຕັ້ງຂອງວິສາຫະກິດ |
| ບົດລາຍງານການກວດກາສະຖານທີ່ ແລະ ສຸຂະພິບານ |

| ເອກະສານປະກອບ |
|---|
| ໃບແຈ້ງໂທດ |
| ຮູບ |
| ໃບຢັ້ງຢືນທີ່ຢູ່ |
| ໃບຢັ້ງຢືນສຸຂະພາບ |
| ຊີວະປະຫວັດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 20 | 0 |